# ຄວາມເຂົ້າໃຈພື້ນຖານ ກ່ຽວກັບ

# ຮຸ້ນ, ຫຼັກຊັບ ແລະ ການຊື້-ຂາຍ

## ໃນຕະຫຼາດຫຼັກຊັບລາວ




ສ້າງໂດຍ:

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ 2022

## ຄະນະເຮັດວຽກ

| | |
|---|---|
| ຜູ້ຊີ້ນຳ: | - ທ່ານ ນາງ ຟອງຈິນດາ ແສງສຸລິວົງ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ |
| ຮ່າງ ແລະ ຮຽບຮຽງ: | - ທ່ານ ເອກະລາດ ສີສານ ຫົວໜ້າພະແນກຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ |
| | - ທ່ານ ສຸລິຍາ ໝື່ນວິເສດ ຮອງຫົວໜ້າພະແນກຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ |
| ຈັດຫາຂໍ້ມູນ: | - ທ່ານ ນາງ ທິບດາວອນ ວິລະວົງ ວິຊາການພະແນກຝຶກອົບຮົບ ແລະ ໂຄສະນາເຜີຍແຜ່ |
| ອອກແບບ: | - ທ່ານ ສົມນຶກ ສີປະເສີດ ວິຊາການພະແນກຝຶກອົບຮົບ ແລະ ໂຄສະນາເຜີຍແຜ່ |
| ເດືອນ, ປີ: | - ສິງຫາ 2022 |

# ສາລະບານ


1. ຮຸ້ນ, ຫຼັກຊັບ, ຜູ້ຖືຮຸ້ນ, ກອງປະຊຸມຜູ້ຖືຮຸ້ນ ແມ່ນຫຍັງ? ....................1
2. ພັນທະບັດລັດຖະບານ ແລະ ຮຸ້ນກູ້ ແມ່ນຫຍັງ? ....................6
3. ຄວາມແຕກຕ່າງຕົ້ນຕໍຂອງ ຮຸ້ນ, ພັນທະບັດລັດຖະບານ ແລະ ຮຸ້ນກູ້ ....................7
4. ການອອກຈຳໜ່າຍຮຸ້ນ ແລະ ການຈົດທະບຽນຮຸ້ນໃນ ຕລຊລ....................8
5. ຈຳນວນບໍລິສັດຈົດທະບຽນໃນ ຕລຊລ ປະຈຸບັນ ມີຈຳນວນທັງໝົດ 11 ບໍລິສັດ: ....................12
6. ຕະຫຼາດຂັ້ນ 1 ແລະ ຕະຫຼາດຂັ້ນ 2 ແມ່ນຫຍັງ? ....................12
7. ໂຄງສ້າງຂອງຕະຫຼາດການເງິນຢູ່ ສປປ ລາວ ....................15
8. ຕະຫຼາດຫຼັກຊັບລາວ “ຕລຊລ” (Lao Securities Exchange ‘’LSX‘’)....................16
9. ບໍລິສັດຫຼັກຊັບ (Securities Company)....................17
10. ການເປີດບັນຊີ ເພື່ອຊື້-ຂາຍ ຫຼັກຊັບ ໃນ ຕລຊລ ແລະ ທະນາຄານຕົວແທນ....................21
11. ການຊື້-ຂາຍຫຼັກຊັບ (ຮຸ້ນ) ໃນ ຕລຊລ ....................26
12. ການປັນຜົນ (Dividend Payment)....................33
13. ການຄຸ້ມຄອງ ວຽກງານຫຼັກຊັບ....................34

# 1. ຮຸ້ນ, ຫຼັກຊັບ, ຜູ້ຖືຮຸ້ນ, ກອງປະຊຸມຜູ້ຖືຮຸ້ນ ແມ່ນຫຍັງ?

***ຮຸ້ນ***[1] ແມ່ນ **ຫຼັກຊັບປະເພດທຶນ** ທີ່ບໍລິສັດມະຫາຊົນ ນໍາໃຊ້ເປັນເຄື່ອງມືລະດົມທຶນ ຊຶ່ງແບ່ງເປັນໜ່ວຍແຕ່ລະໜ່ວຍມີມູນຄ່າເທົ່າກັນ, **ຜູ້ຖືຮຸ້ນ (ຜູ້ລົງທຶນ)** ມີຖານະເປັນເຈົ້າຂອງບໍລິສັດສ່ວນໃດໜຶ່ງ ແລະ ມີສິດໄດ້ຮັບຜົນປະໂຫຍດຕາມອັດຕາສ່ວນຮຸ້ນທີ່ຕົນຖືຄອງ.

- ⇨ ເງິນທີ່ບໍລິສັດ ລະດົມໄດ້ຈາກການອອກຈໍາໜ່າຍ (ຂາຍ) ຮຸ້ນນັ້ນ ແມ່ນທຶນຂອງບໍລິສັດ ຊຶ່ງບໍລິດສັດບໍ່ຈໍາເປັນຕ້ອງຊໍາລະເງິນຄ່າຮຸ້ນຄືນໃຫ້ກັບຜູ້ຖືຮຸ້ນ ເນື່ອງຈາກວ່າຜູ້ຖືຮຸ້ນມີຖານະເປັນເຈົ້າຂອງບໍລິສັດຕາມອັດຕາສ່ວນທີ່ຕົນຖືຄອງ ແລະ ຮ່ວມລົງທຶນໃນບໍລິສັດນັ້ນ ຊຶ່ງແຕກຕ່າງຈາກການອອກຈໍາໜ່າຍຫຼັກຊັບປະເພດໜີ້ (ຮຸ້ນກູ້ ແລະ ພັນທະບັດລັດຖະບານ) ທີ່ມີຮູບແບບເປັນລັກສະນະການກູ້ຢືມ.

---

[1] ***ຮຸ້ນປະກອບດ້ວຍ:*** ***ຮຸ້ນສາມັນ*** *ຊຶ່ງຜູ້ຖືຮຸ້ນບໍ່ສາມາດຖອນຮຸ້ນໄດ້ ສ່ວນ**ຮຸ້ນບູລິມະສິດ** ຜູ້ຖືຮຸ້ນສາມາດຖອນຮຸ້ນໄດ້.*

⇨ ນອກຈາກການກູ້ຢືມເງິນຈາກທະນາຄານ ແລະ ການອອກຈຳໜ່າຍຮຸ້ນກູ້ແລ້ວ ບໍລິສັດສາມາດອອກຈຳໜ່າຍຮຸ້ນ ເພື່ອນຳເອົາເງິນມາຂະຫຍາຍກິດຈະການຂອງຕົນ ຊຶ່ງເປັນອີກທາງເລືອກ ຫຼື ຊ່ອງໜຶ່ງຂອງການລະດົມທຶນ.

**ຕົວຢ່າງ** ບໍລິສັດ ABC ມີທຶນຈົດທະບຽນ ຈຳນວນໃດໜຶ່ງ ແລະ ແບ່ງຈຳນວນຮຸ້ນ ຊຶ່ງແຕ່ລະຮຸ້ນມີມູນຄ່າກຳນົດເທົ່າກັນ.

| | |
|---|---|
| ທຶນຈົດທະບຽນ (Registered Capital) | 40.000.000.000 ກີບ |
| ຈຳນວນຮຸ້ນ (Share/Stock) | 20.000.000 ຮຸ້ນ |
| ມູນຄ່າກຳນົດ (Par Value) | 2.000 ກີບ/ຮຸ້ນ |

**ຫຼັກຊັບ** ແມ່ນເຄື່ອງມືທາງດ້ານການເງິນ ຊຶ່ງຜູ້ຖືຄອງມີສິດ ແລະ ຜົນປະໂຫຍດຕາມຄຸນລັກສະນະຂອງຫຼັກຊັບແຕ່ລະປະເພດ ອີງຕາມກົດໝາຍວ່າດ້ວຍຫຼັກຊັບ ສະບັບປັບປຸງ ຫຼັກຊັບທີ່ອະນຸຍາດໃຫ້ມີການຊື້-ຂາຍຢູ່ ຕລຊລ ປະກອບມີດັ່ງນີ້:



***ຜູ້ຖືຮຸ້ນ ຫຼື ຜູ້ລົງທຶນ*** ທີ່ຊື້ຮຸ້ນຂອງບໍລິສັດ ມີສິດໄດ້ຮັບຜົນປະໂຫຍດ ແລະ ສິດຕ່າງໆຕາມອັດຕາສ່ວນທີ່ຕົນຖືຄອງ ເຊັ່ນ:

- ສິດໄດ້ຮັບເງິນປັນຜົນ;
- ສິດໄດ້ຮັບຂໍ້ມູນຂ່າວສານກ່ຽວກັບການເຄື່ອນໄຫວ ຫຼື ຜົນການດໍາເນີນງານຂອງບໍລິສັດ;
- ສິດເຂົ້າຮ່ວມ**ກອງປະຊຸມຜູ້ຖືຮຸ້ນ**, ສິດໃນການປະກອບຄໍາເຫັນ ແລະ ລົງຄະແນນສຽງຮັບຮອງວາລະຕ່າງໆໃນກອງປະຊຸມຜູ້ຖືຮຸ້ນ;
- ສິດໃນການປ່ຽນຄວາມເປັນເຈົ້າຂອງຂອງຮຸ້ນທີ່ຕົນເອງຖືຄອງ (ສິດໃນການຂາຍຮຸ້ນຂອງຕົນ);
- ສິດໃນການລົງຄະແນນສຽງເລືອກຕັ້ງ ຫຼື ປົດຕໍາແໜ່ງຜູ້ບໍລິຫານລະດັບສູງຂອງບໍລິສັດ;
- ມີບູລິມະສິດໃນການຈອງຊື້ຮຸ້ນອອກໃໝ່ຕາມມະຕິກອງຂອງກອງປະຊຸມຜູ້ຖືຮຸ້ນ ແລະ ສິດອື່ນໆ ຕາມກົດໝາຍກ່ຽວຂ້ອງກໍານົດ.

***ກອງປະຊຸມຜູ້ຖືຮຸ້ນ*** ແມ່ນການຈັດຕັ້ງສູງສຸດຂອງບໍລິສັດ ຊຶ່ງມີ 2 ປະເພດຄື: ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ.

- ⇨ ກອງປະຊຸມສາມັນ ຕ້ອງເປີດຂຶ້ນຢ່າງໜ້ອຍປີລະຄັ້ງ ເພື່ອລົງມະຕິຮັບຮອງເອົາວາລະສຳຄັນຕ່າງໆຂອງບໍລິສັດ; ອີງຕາມຄຳແນະນຳວ່າດ້ວຍການຈັດກອງປະຊຸມຜູ້ຖືຮຸ້ນສະບັບເລກທີ 001/ສຄຄຊ ລົງວັນທີ 16 ພຶດສະພາ 2022 ໄດ້ກຳນົດໃຫ້ກອງປະຊຸມຜູ້ຖືຮຸ້ນຕ້ອງຖືກຈັດຂຶ້ນພາຍໃນ 60 ວັນນັບຕັ້ງແຕ່ມື້ປິດປຶ້ມບັນຊີທະບຽນຜູ້ຖືຮຸ້ນເປັນຕົ້ນໄປ.
- ⇨ ກອງປະຊຸມວິສາມັນ ເປີດຂຶ້ນເວລາໃດກໍໄດ້ ຖ້າເຫັນວ່າມີຄວາມຈຳເປັນທີ່ຕ້ອງລົງມະຕິຮັບຮອງເອົາວາລະສຳຄັນ ແລະ ຮີບດ່ວນໃດໜຶ່ງ.

## 2. ພັນທະບັດລັດຖະບານ ແລະ ຮຸ້ນກູ້ ແມ່ນຫຍັງ?

***ພັນທະບັດລັດຖະບານ*** ແມ່ນ **ຫຼັກຊັບປະເພດໜີ້** ທີ່**ລັດຖະບານ** ນໍາໃຊ້ເປັນເຄື່ອງມືເພື່ອລະດົມທຶນ ຊຶ່ງແບ່ງເປັນແຕ່ລະໜ່ວຍມີມູນຄ່າເທົ່າກັນ, ກໍານົດຜົນຕອບແທນໄວ້ລ່ວງໜ້າໃນອັດຕາສ່ວນເທົ່າກັນ ແລະ ຜູ້ຖືພັນທະບັດມີຖານະເປັນເຈົ້າໜີ້. ຜູ້ຖືພັນທະບັດລັດຖະບານມີສິດໄດ້ຮັບຜົນຕອບແທນ ໃນຮູບແບບອັດຕາດອກເບ້ຍຕາມທີ່ໄດ້ກໍາ ນົດໄວ້ລ່ວງໜ້າ ແລະ ມີສິດໄດ້ຮັບຕົ້ນທຶນໃນມື້ຄົບກໍານົດໄຖ່ຖອນ.

***ຮຸ້ນກູ້*** ແມ່ນ **ຫຼັກຊັບປະເພດໜີ້** ທີ່**ບໍລິສັດມະຫາຊົນ** ນໍາໃຊ້ເປັນເຄື່ອງມືເພື່ອລະດົມທຶນ ຊຶ່ງແບ່ງເປັນແຕ່ລະໜ່ວຍມີມູນຄ່າເທົ່າກັນ, ກໍານົດຜົນຕອບແທນໄວ້ລ່ວງໜ້າໃນອັດຕາສ່ວນເທົ່າກັນ ແລະ ຜູ້ຖືຮຸ້ນກູ້ມີຖານະເປັນເຈົ້າໜີ້ຂອງບໍລິສັດ. ຜູ້ຖືຮຸ້ນກູ້ມີສິດໄດ້ຮັບຜົນຕອບແທນ ໃນຮູບແບບອັດຕາດອກເບ້ຍຕາມທີ່ໄດ້ກໍານົດໄວ້ລ່ວງໜ້າ ແລະ ມີສິດໄດ້ຮັບຕົ້ນທຶນໃນມື້ຄົບກໍານົດໄຖ່ຖອນ.

# 3. ຄວາມແຕກຕ່າງຕົ້ນຕໍຂອງ ຮຸ້ນ, ພັນທະບັດລັດຖະບານ ແລະ ຮຸ້ນກູ້

| | ຫຼັກຊັບປະເພດທຶນ (ຮຸ້ນ) | ຫຼັກຊັບປະເພດໜີ້ | |
|---|---|---|---|
| | | ພັນທະບັດ ລັດຖະບານ | ຮຸ້ນກູ້ |
| ຜູ້ອອກຈຳໜ່າຍ | ບໍລິສັດມະຫາຊົນ | ລັດຖະບານ | ບໍລິສັດມະຫາຊົນ |
| ຖານະຂອງຜູ້ຖືຄອງ | ເປັນເຈົ້າຂອງບໍລິສັດສ່ວນໃດໜຶ່ງ | ເປັນເຈົ້າໜີ້ | |
| ຜົນຕອບແທນ | ▪ ເງິນປັນຜົນ (ຂຶ້ນກັບຜົນປະກອບການ)<br>▪ ສ່ວນຕ່າງຈາກກຳໄລຂອງລາຄາຮຸ້ນທີ່ຂຶ້ນ | ດອກເບ້ຍ (ອັດຕາທີ່ແນ່ນອນ) | |
| ຄວາມສ່ຽງ | ▪ ມີຄວາມສ່ຽງຂ້ອນຂ້າງສູງ | ບໍ່ມີຄວາມສ່ຽງ | ມີຄວາມສ່ຽງຂ້ອນຂ້າງຕ່ຳ |
| ອາຍຸຂອງຫຼັກຊັບ | ບໍ່ມີກຳນົດ | ມີກຳນົດ | |

# 4. ການອອກຈຳໜ່າຍຮຸ້ນ ແລະ ການຈົດທະບຽນຮຸ້ນໃນ ຕລຊລ

ບໍລິສັດ → ບໍລິສັດ ມະຫາຊົນ → ບໍລິສັດອອກ ຈຳໜ່າຍ → ບໍລິສັດຈົດ ທະບຽນ

⇨ **ບໍລິສັດ ທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນ** ເພື່ອລະດົມທຶນມາຂະຫຍາຍກິດຈະການຂອງຕົນນັ້ນ ຕ້ອງມີເງື່ອນໄຂຕາມ ກົດໝາຍ ວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ກຳນົດ ເຊັ່ນ ຕ້ອງເປັນ ບໍລິສັດມະຫາຊົນ;

⇨ ໜຶ່ງໃນເງື່ອນໄຂຂອງການເປັນ ບໍລິສັດມະຫາຊົນ ແມ່ນໄດ້ຮັບການສ້າງຕັ້ງຂຶ້ນຕາມກົດໝາຍທີ່ກ່ຽວຂ້ອງກຳນົດ (ມີຈຳນວນຜູ້ຖືຮຸ້ນທີ່ເປັນຜູ້ສ້າງຕັ້ງ ຢ່າງໜ້ອຍ 9 ຄົນ ເປັນຕົ້ນ);

⇨ **ບໍລິສັດມະຫາຊົນ** ທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນ ຍື່ນຄຳຮ້ອງສະເໜີຕໍ່ **ຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ)** ເພື່ອຂໍອະນຸຍາດອອກຈຳໜ່າຍຮຸ້ນ ຊຶ່ງເປັນ**ການອອກຈຳໜ່າຍຮຸ້ນໃຫ້ກັບມວນຊົນຄັ້ງທຳອິດ (Initial Public Offering 'IPO')**;

- ບໍລິສັດມະຫາຊົນທີ່ໄດ້ຮັບອະນຸຍາດຈາກ ຄຄຊ ມີຖານະເປັນບໍລິສັດອອກຈຳໜ່າຍຮຸ້ນ ແລະ ສາມາດ ອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ ຊຶ່ງເປັນການຂາຍຮຸ້ນໃນ **ຕະຫຼາດຂັ້ນໜຶ່ງ (Primary Market);**
- ພ້ອມດຽວກັນ ບໍລິສັດອອກຈຳໜ່າຍຮຸ້ນ ກໍສາມາດ ຍື່ນຄຳຮ້ອງສະເໜີຕໍ່ ຕລຊລ ເພື່ອຂໍຈົດທະບຽນ ບໍລິສັດຂອງຕົນນຳ ຕລຊລ ຫາກສຳເລັດການອອກຈຳໜ່າຍຮຸ້ນໃນຕະຫຼາດຂັ້ນໜຶ່ງ ຕາມລະບຽບການ ກຳນົດ;
- ບໍລິສັດອອກຈຳໜ່າຍຮຸ້ນ ທີ່ສາມາດຈົດທະບຽນ ຕາມລະບຽບການຂອງ ຕລຊລ ກຳນົດ ຈະມີຖານະ ເປັນ **ບໍລິສັດຈົດທະບຽນ**;
- ການຈົດທະບຽນໃນ ຕລຊລ ແມ່ນເປັນການນຳເອົາຮຸ້ນ ຂອງບໍລິສັດທີ່ອອກຈຳໜ່າຍ ໃນຕະຫຼາດຂັ້ນ 1 ເຂົ້າມາໃນ **ຕະຫຼາດຂັ້ນ 2 (Secondary Market)** ເພື່ອໃຫ້ຜູ້ລົງທຶນສາມາດຊື້-ຂາຍຮຸ້ນໄດ້;
- ບໍລິສັດອອກຈຳໜ່າຍຮຸ້ນ ແລະ ບໍລິສັດຈົດທະບຽນໃນ ຕລຊລ ສາມາດອອກຈຳໜ່າຍຮຸ້ນເພີ່ມໃຫ້ແກ່ ມວນຊົນ (Public Offering “PO”), ອອກຈຳໜ່າຍຮຸ້ນໃນວົງຈຳກັດ (Privat Placement ‘PP’) ແລະ ອອກຈຳໜ່າຍຮຸ້ນເພີ່ມໃຫ້ແກ່ຜູ້ຖືຮຸ້ນເດີມ (Right Offering “RO”).

## ▪ ຈຳນວນ (ອັດຕາສ່ວນ) ຮຸ້ນຈົດທະບຽນທີ່ຊື້-ຂາຍໃນ ຕລຊລ

ຈຳນວນຮຸ້ນຈົດທະບຽນທີ່ອະນຸຍາດໃຫ້ຊື້-ຂາຍ (Floating Shares/Tradable Shares) ໃນ ຕລຊລ ແມ່ນຕ້ອງຝາກນຳ ຕລຊລ ເປັນຮຸ້ນສ່ວນໃດໜຶ່ງ (ຕາມນະໂຍບາຍຂອງບໍລິສັດ ແລະ ຕາມລະບຽບການກຳນົດ) ຊຶ່ງເປັນຮຸ້ນທີ່ໄດ້ອອກໃຫ້ກັບມວນຊົນໃນຕະຫຼາດຂັ້ນໜຶ່ງ.

## ຕົວຢ່າງ

- ⇨ ບໍລິສັດ ABC ນຳເອົາຮຸ້ນທັງໝົດຂອງຕົນ 20.000.000 ຮຸ້ນເຂົ້າຈົດທະບຽນໃນ ຕລຊລ;
- ⇨ ບໍລິສັດ ໄດ້ແບ່ງອັດຕາສ່ວນ 20% ຂອງຈຳນວນຮຸ້ນທັງໝົດ ເທົ່າກັບ 4.000.000 ຮຸ້ນ (Floating Shares/Tradable Shares) ຊຶ່ງເປັນຮຸ້ນທີ່ສາມາດຊື້-ຂາຍໃນ ຕລຊລ *(ຮຸ້ນຝາກນຳ ຕລຊລ)*;
- ⇨ ສ່ວນຮຸ້ນທີ່ເຫຼືອ 16.000.000 ຮຸ້ນ ແມ່ນຜູ້ຖືຮຸ້ນທີ່ເປັນຜູ້ສ້າງຕັ້ງບໍລິສັດເປັນຜູ້ຖືຄອງ ແລະ ເປັນຮຸ້ນທີ່ຍັງບໍ່ອະນຸຍາດໃຫ້ນຳມາຊື້-ຂາຍໃນ ຕລຊລ ພາຍໃນເວລາກຳນົດທີ່ແນ່ນອນ.

ຈຳນວນຮຸ້ນຂອງບໍລິສັດ ABC ທີ່ຈົດທະບຽນ
ທັງໝົດ 20 ລ້ານຮຸ້ນ



## 5. ຈຳນວນບໍລິສັດຈົດທະບຽນໃນ ຕລຊລ ປະຈຸບັນ ມີຈຳນວນທັງໝົດ 11 ບໍລິສັດ:

| ລ/ດ | ຊື່ບໍລິສັດຈົດທະບຽນ | ປະເພດທຸລະກິດ |
|---|---|---|
| 1 | ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | ທະນາຄານ |
| 2 | ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ | ພະລັງງານໄຟຟ້າ |
| 3 | ບໍລິສັດລາວເວີນ ມະຫາຊົນ | ການຄ້າ ແລະ ການລົງທຶນ |
| 4 | ບໍລິສັດປີໂຕໂລຽມເທດຕິ້ງ ມະຫາຊົນ | ການຄ້າພະລັງງານນ້ຳມັນ |
| 5 | ບໍລິສັດສຸວັນນີໂຮມເຊັນເຕີ ມະຫາຊົນ | ການຄ້າ |
| 6 | ບໍລິສັດພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ | ກໍ່ສ້າງ ແລະ ພັດທະນາອະສັງຫາລິມະຊັບ |
| 7 | ບໍລິສັດສີມັງລາວ ມະຫາຊົນ | ອຸດສາຫະກຳການຜະລິດ |
| 8 | ບໍລິສັດມະຫະທຶນເຊົ່າສິນເຊື່ອ ມະຫາຊົນ | ເຊົ່າສິນເຊື່ອ |
| 9 | ບໍລິສັດລາວອາໂກເທັກ ມະຫາຊົນ | ກະສິກຳ |
| 10 | ບໍລິສັດວຽງຈັນເຊັນເຕີ ມະຫາຊົນ | ບໍລິການ |
| 11 | ບໍລິສັດລາວອາຊຽນເຊົ່າສິນເຊື່ອ ມະຫາຊົນ | ເຊົ່າສິນເຊື່ອ |

# 6. ຕະຫຼາດຂັ້ນ 1 ແລະ ຕະຫຼາດຂັ້ນ 2 ແມ່ນຫຍັງ?

## ຕະຫຼາດຂັ້ນ 1




ຢູ່ໃນຕະຫຼາດຂັ້ນ 1 ແມ່ນການຂາຍຮຸ້ນໂດຍກົງ ຂອງບໍລິສັດໃຫ້ກັບຜູ້ລົງທຶນ ໂດຍມີ ຜູ້ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ (ບໍລິສັດຫຼັກຊັບ) ບໍລິການຮັບຈອງຊື້ຮຸ້ນໃຫ້ກັບຜູ້ລົງທຶນ ແລະ ຊຳລະເງິນຄ່າຮຸ້ນໃຫ້ກັບບໍລິສັດ.

- ບໍລິສັດອອກຈຳໜ່າຍຫຼັກຊັບ ດຳເນີນຕາມຂັ້ນຕອນຕ່າງໆ ແລະ ເປີດເຜີຍ ໜັງສືຊວນຊື້ (Prospectus) ໃຫ້ແກ່ມວນຊົນ ຫຼື ເປົ້າໝາຍຜູ້ລົງທຶນຊາບ;
- ເປົ້າໝາຍຜູ້ລົງທຶນສຶກສາ ໜັງສືຊວນຊື້ ກ່ອນຕັດສິນໃຈລົງທຶນ ຫຼື ຊື້ຮຸ້ນຂອງບໍລິສັດ;
- ເມື່ອຜູ້ລົງທຶນຊື້ຮຸ້ນຂອງບໍລິສັດ ກໍຈະມີຖານະເປັນຜູ້ຖືຮຸ້ນຂອງບໍລິສັດ;


ຕະຫຼາດຂັ້ນ 2 (ຕະຫຼາດຫຼັກຊັບລາວ)
ຜູ້ລົງທຶນ
ສັ່ງຊື້-ຂາຍຮຸ້ນຢູ່ ຕລຊລ
ບໍລິສັດຫຼັກຊັບ
(ນາຍໜ້າຊື້-ຂາຍຮຸ້ນ)
ຕະຫຼາດຂັ້ນ 2 ເປັນບ່ອນໃຫ້ຜູ້ລົງທຶນເຂົ້າມາຊື້-ຂາຍ ຮຸ້ນ ຫຼື ປ່ຽນມືກັນ.
ສົ່ງຄຳສັ່ງຊື້-ຂາຍຮຸ້ນ
LSX
ຕະຫຼາດຫຼັກຊັບລາວ
ບໍລິສັດຈົດທະບຽນ
ຈົດທະບຽນ

# 7. ໂຄງສ້າງຂອງຕະຫຼາດການເງິນຢູ່ ສປປ ລາວ



## 8. ຕະຫຼາດຫຼັກຊັບລາວ “ຕລຊລ” (Lao Securities Exchange ”LSX”)

⇨ ເປັນຕະຫຼາດຫຼັກຊັບແຫ່ງທຳອິດຂອງ ສປປ ລາວ ແລະ ເປັນຕະຫຼາດຂັ້ນ 2 ທີ່ລວມສູນ (Exchange ຫຼື Organized Market); ຕລຊລ ຍັງເປັນທັງສູນຮັບຝາກຫຼັກຊັບ (Central Securities Depository);

⇨ ເປັນບ່ອນລະດົມທຶນໄລຍະຍາວໃຫ້ກັບວິສາຫະກິດ (ບໍລິສັດ) ທີ່ຕ້ອງການເງິນທຶນເພື່ອນຳໄປຂະຫຍາຍກິດຈະການຂອງຕົນ;

⇨ ເປັນບ່ອນສ້າງສະພາບຄ່ອງໃຫ້ກັບຜູ້ລົງທຶນ (ຜູ້ຖືຮຸ້ນ) ທີ່ຕ້ອງການຂາຍຮຸ້ນ ແລະ ຜູ້ລົງທຶນທີ່ຕ້ອງການຊື້ຮຸ້ນເພື່ອລົງທຶນໄລຍະຍາວ ຫຼື ເກັງກຳໄລໄລຍະສັ້ນ;

⇨ ຕະຫຼາດຂັ້ນ 2 ທີ່ລວມສູນ ແມ່ນມີລະບຽບການ, ກົນໄກ, ລະບົບການຊື້-ຂາຍ, ການໄລ່ລຽງ, ການຮັບຝາກຫຼັກຊັບ, ການຊຳລະເງິນ ແລະ ສົ່ງມອບຫຼັກຊັບ ທີ່ຄົບຊຸດ ແລະ ສອດຄ່ອງຕາມຫຼັກການສາກົນກຳນົດ.

⇨ ຕະຫຼາດຫຼາດຫຼັກຊັບລາວ ເປັນອົງປະກອບໜຶ່ງຂອງ**ຕະຫຼາດການເງິນ**.

## 9. ບໍລິສັດຫຼັກຊັບ (Securities Company)

**ບໍລິສັດຫຼັກຊັບ**: ແມ່ນສະຖາບັນການເງິນ ທີ່ໄດ້ຮັບອະນຸຍາດ ຈາກຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ) ໃຫ້ເຄື່ອນໄຫວທຸລະກິດຫຼັກຊັບ ຊຶ່ງປະກອບມີ 3 ປະເພດ ຄື:

**ທຸລະກິດຫຼັກຊັບ**

- ທີ່ປຶກສາດ້ານການເງິນ (Financial Advisor)
- ນາຍໜ້າຊື້-ຂາຍຫຼັກຊັບ (Broker)
- ຜູ້ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ (Underwriter)

.

## ທີ່ປຶກສາທາງດ້ານການເງິນ: ບໍລິສັດຫຼັກຊັບສາມາດໃຫ້ບໍລິການດັ່ງນີ້:

- **ທີ່ປຶກສາດ້ານການເງິນ (Financial Advisor):** ໃຫ້ຄໍາປຶກສາແກ່ບໍລິສັດ ໃນການກະກຽມຄວາມພ້ອມ ເພື່ອໃຫ້ສາມາດອອກຈໍາໜ່າຍຫຼັກຊັບ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ ເປັນຕົ້ນແມ່ນ: ໂຄງສ້າງການຈັດຕັ້ງ, ການຄຸ້ມຄອງບໍລິຫານ, ການເງິນ, ການດໍາເນີນທຸລະກິດ;
- **ທີ່ປຶກສາການລົງທຶນ (Investment Advisor):** ຊ່ວຍໃຫ້ຂໍ້ມູນແກ່ຜູ້ລົງທຶນ ເປັນຕົ້ນແມ່ນ ກ່ຽວກັບການວິເຄາະ ແລະ ການລົງທຶນໃນຫຼັກຊັບ ທີ່ອອກຈໍາໜ່າຍໃນຕະຫຼາດຂັ້ນໜຶ່ງ ແລະ ຈົດທະບຽນໃນຕະຫຼາດຂັ້ນສອງ.

## ນາຍໜ້າຊື້-ຂາຍຫຼັກຊັບ: ບໍລິສັດຫຼັກຊັບສາມາດໃຫ້ບໍລິການດັ່ງນີ້:

- ທີ່ປຶກສາດ້ານການເງິນ (Investment Advisor);
- ເປີດບັນຊີ ຊື້-ຂາຍ ຫຼັກຊັບ ໃຫ້ແກ່ຜູ້ລົງທຶນ;
- ນາຍໜ້າຊື້-ຂາຍຫຼັກຊັບ (Broker) ຕາມຄໍາສັ່ງຊື້ ຫຼື ສັ່ງຂາຍຂອງຜູ້ລົງທຶນ;
- ຄ້າຫຼັກຊັບໃນນາມບໍລິສັດ (Dealer);
- ສະໜອງຂໍ້ມູນຂ່າວສານຕ່າງໆທີ່ຕິດພັນກັບສິດ ແລະ ຜົນປະໂຫຍດ ໃຫ້ແກ່ຜູ້ລົງທຶນ.

**ການຄໍ້າປະກັນການອອກຈໍາໜ່າຍຫຼັກຊັບ**: ບໍລິສັດຫຼັກຊັບສາມາດໃຫ້ບໍລິການດັ່ງນີ້:

- ທີ່ປຶກສາດ້ານການເງິນ (Financial Advisor);
- ນາຍໜ້າຊື້-ຂາຍຫຼັກຊັບ (Broker);
- ຄໍ້າປະກັນການອອກຈໍາໜ່າຍຫຼັກຊັບ (Underwriter); ລວມມີ ການບໍລິຫານກອງທຶນສ່ວນບຸກຄົນ.

ໃນປະຈຸບັນ ຢູ່ ສປປ ລາວ ມີບໍລິສັດຫຼັກຊັບ 4 ແຫ່ງ, ຊຶ່ງໃນນັ້ນມີພຽງ 3 ບໍລິສັດ ທີ່ເຄື່ອນໄຫວທຸລະກິດເຕັມຮູບແບບ ຫຼື ທັງ 3 ປະເພດທຸລະກິດ, ສ່ວນບໍລິສັດຫຼັກຊັບອີກ 1 ແຫ່ງ ແມ່ນເຄື່ອນໄຫວທຸລະກິດທີ່ປຶກສາທາງດ້ານການເງິນເທົ່ານັ້ນ.

# ບໍລິສັດຫຼັກຊັບຢູ່ ສປປ ລາວ ແລະ ປະເພດທຸລະກິດທີ່ເຄື່ອນໄຫວ

### ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ

- ທີ່ປຶກສາທາງດ້ານການເງິນ;
- ນາຍໜ້າຊື້-ຂາຍຫຼັກຊັບ;
- ຄໍ້າປະກັນການອອກຈຳໜ່າຍຫຼັກຊັບ.

### ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ

- ທີ່ປຶກສາທາງດ້ານການເງິນ;
- ນາຍໜ້າຊື້-ຂາຍຫຼັກຊັບ;
- ຄໍ້າປະກັນການອອກຈຳໜ່າຍຫຼັກຊັບ.

### ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ

- ທີ່ປຶກສາທາງດ້ານການເງິນ;
- ນາຍໜ້າຊື້-ຂາຍຫຼັກຊັບ;
- ຄໍ້າປະກັນການອອກຈຳໜ່າຍຫຼັກຊັບ.

*(ບໍລິຫານກອງທຶນສ່ວນບຸກຄົນ)*

### ບໍລິສັດຫຼັກຊັບ ເອພີເອັມລາວ ຈຳກັດ

- ທີ່ປຶກສາທາງດ້ານການເງິນ;

## 10. ການເປີດບັນຊີ ເພື່ອຊື້-ຂາຍ ຫຼັກຊັບ ໃນ ຕລຊລ ແລະ ທະນາຄານຕົວແທນ

⇨ ຜູ້ລົງທຶນທີ່ຊື້-ຂາຍຫຼັກຊັບໃນ ຕລຊລ ຕ້ອງມີບັນຊີ 2 ປະເພດຄື:



(1) **ບັນຊີເງິນຝາກ** ນຳທະນາຄານຕົວແທນ (Correspondent Bank) ເພື່ອຊຳລະເງິນຄ່າຊື້ຮຸ້ນ ແລະ ຮັບເງິນຈາກການຂາຍຮຸ້ນ.

⇨ ການຂໍເປີດບັນຊີແມ່ນປະກອບເອກະສານຄຳຮ້ອງ ຕາມການກຳນົດຂອງທະນາຄານ;

ປະເພດບັນຊີເງິນຝາກ:
- 1. ບັນຊີເງິນຝາກປະຢັດ; ຫຼື
- 2. ບັນຊີເງິນຝາກກະແສລາຍວັນ

(2) **ທະນາຄານຕົວແທນເພື່ອການຊຳລະເງິນ** ມີ 2 ແຫ່ງຄື:

❶ **ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL)** ເປັນທະນາຄານຕົວແທນໃຫ້ກັບ ບໍລິສັດຫຼັກຊັບ ດັ່ງລຸ່ມນີ້:

1. ບໍລິສັດຫຼັກຊັບ ທຄລຄ-ກາທ ຈຳກັດ (BCEL-KT Securities Company Limited); ແລະ

2. ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ (Lao-China Securities Company Limited)

⇨ ຜູ້ລົງທຶນ ທີ່ເລືອກໃຊ້ບໍລິການນໍາ ບໍລິສັດຫຼັກຊັບ ທຄລຄ-ກທ ຈໍາກັດ ຫຼື/ແລະ ບໍລິສັດຫຼັກຊັບ ລາວ-ຈີນ ຈໍາກັດ ຕ້ອງເປີດບັນຊີເງິນຝາກນໍາ ທະນາຄານການຄ້າຕ່າງປະເທດລາວ (BCEL).

ບໍລິສັດຫຼັກຊັບ ທຄຕລ-ກທ ຈໍາກັດ

BCEL·KT

ບໍລິສັດຫຼັກຊັບ ລາວ-ຈີນ ຈໍາກັດ

LCS

ທະນາຄານການຄ້າຕ່າງປະເທດລາວ

BCEL

❷ **ທະນາຄານພັດທະນາລາວ (LDB)** ເປັນທະນາຄານຕົວແທນໃຫ້ກັບ ບໍລິສັດຫຼັກຊັບ:

ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ (Lanexang Securities Public Company)

⇨ ຜູ້ລົງທຶນ ທີ່ເລືອກໃຊ້ບໍລິການນຳ ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ ຕ້ອງເປີດບັນຊີເງິນຝາກນຳ ທະນາຄານພັດທະນາລາວ (LDB).

ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ → ທະນາຄານພັດທະນາລາວ

*ໃນປະຈຸບັນ ໄດ້ມີການພັດທະນາລະບົບ ເພື່ອຮອງຮັບການເຊື່ອມຕໍ່ກັບ ຫຼາຍທະນາຄານຕົວແທນ ຊຶ່ງຈະອຳນວຍຄວາມສະດວກ ເຮັດໃຫ້ຜູ້ລົງທຶນ ທີ່ມີບັນຊີເງິນຝາກນຳທະນາຄານອື່ນ ສາມາດຊື້-ຂາຍຮຸ້ນ ໃນ ຕລຊລ ໄດ້*

⇨ ການຂໍເປີດບັນຊີແມ່ນປະກອບເອກະສານຄຳຮ້ອງ ຕາມລະບຽບການກ່ຽວຂ້ອງກຳນົດ;

**ບັນຊີຫຼັກຊັບ:**

- ບັນຊີຮຸ້ນ
- ບັນຊີພັນທະບັດລັດຖະບານ
- ອື່ນໆ ຕາມລະບຽບການກຳນົດ

⇨ ຜູ້ລົງທຶນສາມາດເປີດ 1 ບັນຊີຫຼັກຊັບ[2] ກັບ 1 ບໍລິສັດຫຼັກຊັບ ສຳລັບຫຼັກຊັບປະເພດໃດໜຶ່ງ;

---

[2] *ບັນຊີຫຼັກຊັບ ນຳບໍລິສັດຫຼັກຊັບ ຈະເຊື່ອມຕໍ່ຂໍ້ມູນກັບ ບັນຊີເງິນຝາກນຳທະນາຄານຕົວແທນ*

# 11. ການຊື້-ຂາຍຫຼັກຊັບ (ຮຸ້ນ) ໃນ ຕລຊລ

## (1) ຄວາມໝາຍຂອງຕົວອັກສອນຫຍໍ້ T, T+1 ແລະ T+2

| T+0 | T+1 | T+2 |
|---|---|---|
| ມື້ ຊື້-ຂາຍ | ມື້ ໄລ່ລຽງ | ມື້ ຊຳລະ |

**T ຫຼື T+0:**

**ມື້ທີ່ມີການຊື້-ຂາຍ (Transaction/Trade Day)**



**T+1:**

**ມື້ທີ 1 ຫຼັງມື້ທີ່ມີການຊື້-ຂາຍ (Transaction/Trade Day+1)** ຊຶ່ງເປັນມື້ໄລ່ລຽງ **(Clearing)** ຈຳນວນເງິນທີ່ຕ້ອງຊຳລະ ແລະ ຮຸ້ນທີ່ຕ້ອງສົ່ງມອບ.



**T+2:**

**ມື້ທີ 2 ຫຼັງມື້ທີ່ມີການຊື້-ຂາຍ (Transaction/Trade Day+2)** ຊຶ່ງເປັນມື້ຊຳລະເງິນໃຫ້ກັບຜູ້ຂາຍ ແລະ ສົ່ງມອບຮຸ້ນໃຫ້ກັບຜູ້ຊື້ **(Settlement Date)**



## ຕົວຢ່າງ

- ⇨ ຜູ້ລົງທຶນທີ່ຊື້ຮຸ້ນ ແລະ ຂາຍຮຸ້ນໃນວັນທີ 2, ຜູ້ຊື້ຈະໄດ້ຮັບຮຸ້ນ ແລະ ຜູ້ຂາຍຈະໄດ້ຮັບເງິນ ໃນວັນທີ 4;
- ⇨ ຜູ້ລົງທຶນທີ່ຊື້ຮຸ້ນ ແລະ ຂາຍຮຸ້ນໃນວັນທີ 6, ຜູ້ຊື້ຈະໄດ້ຮັບຮຸ້ນ ແລະ ຜູ້ຂາຍຈະໄດ້ຮັບເງິນ ໃນວັນທີ 10;
- ⇨ ຮອບວຽນການຊໍາລະ (Settlement Cycle) ແມ່ນ 2 ມື້ ຫຼື T+2.

ຊື້-ຂາຍຮຸ້ນ → 2

ໄດ້ຮັບເງິນ ແລະ ຮຸ້ນ → 4

ຊື້-ຂາຍຮຸ້ນ → 6

| ອາທິດ | ຈັນ | ອັງຄານ | ພຸດ | ພະຫັດ | ສຸກ | ເສົາ |
|---|---|---|---|---|---|---|
| 1 | **2** | 3 | **4** | 5 | **6** | 7 |
| 8 | 9 | **10** | 11 | 12 | 13 | 14 |

ໄດ້ຮັບເງິນ ແລະ ຮຸ້ນ → 10

## (2) ມື້ທີ່ມີການຊື້-ຂາຍ (T+0)




(1).ຜູ້ຊື້ໂອນເງິນມັດຈຳລ່ວງໜ້າເຂົ້າບັນຊີເງິນ ສຳລັບຊື້-ຂາຍຮຸ້ນ; ຜູ້ຂາຍຕ້ອງມີຮຸ້ນໃນບັນຊີ;

(2).ຜູ້ຊື້ ແລະ ຜູ້ຂາຍສັ່ງຊື້ ແລະ ສັ່ງຂາຍຮຸ້ນນຳ ພະນັກງານ ນາຍໜ້າຊື້-ຂາຍຫຼັກຊັບ;

(3).ພະນັກງານ ນາຍໜ້າຊື້-ຂາຍຫຼັກຊັບ ສົ່ງຄຳສັ່ງຊື້ ແລະ ຄຳສັ່ງຂາຍ ຫາ ຕລຊລ (ຜ່ານລະບົບ);

⇨ ຄຳສັ່ງຊື້ ແລະ ຄຳສັ່ງຂາຍ ຈະຖືກຈັບຄູ່ (Matching/Execution) ຕາມກົນໄກຕະຫຼາດ.

# ວິທີການສັ່ງຊື້-ຂາຍຮຸ້ນ ຂອງຜູ້ລົງທຶນ



## ຂໍ້ມູນການດຳເນີນຕະຫຼາດ

| ປະເພດຫຼັກຊັບ | ຮຸ້ນ (ສາມັນ) | ພັນທະບັດລັດຖະບານ |
|---|---|---|
| ເວລາຊື້-ຂາຍ | 08:30-15:00 | 08:30-11:30 |
| ຂອບເຂດລາຄາໃນມື້ | +/- 10% | +/- 30% |
| ຫົວໜ່ວຍຊື້-ຂາຍຕໍ່າສຸດ | 100 ຮຸ້ນ | 1 ໜ່ວຍ |
| ການຈັບຄູ່ (ການບັນລຸການຊື້-ຂາຍ) | ການປະມູນແບບເປັນຊ່ວງເວລາ ແລະ ແບບຕໍ່ເນື່ອງ | ເຈລະຈາ / ຕໍ່ລອງລາຄາ |
| ຮອບວຽນການຊໍາລະ | T+2 | T+2 |
| ຮູບແບບຫຼັກຊັບ | ອະໃບ (Scriptless) | ອະໃບ (Scriptless) |
| ຄ່າທຳນຽມການຊື້-ຂາຍ | ຊື້: 0,34% / ຂາຍ: 0,34% | ຊື້: 0,032% / ຂາຍ: 0,032% |

## (3) ມື້ທີ 1 ຫຼັງມື້ທີ່ມີການຊື້-ຂາຍ (T+1)




- ຕລຊລ ດຳເນີນການໄລ່ລຽງ (Clearing) ຈຳນວນຮຸ້ນ ແລະ ເງິນ ໃຫ້ກັບບໍລິສັດຫຼັກຊັບຝ່າຍຊື້ ແລະ ຝ່າຍຂາຍ;
- ບໍລິສັດຫຼັກຊັບຝ່າຍຊື້ ແລະ ຝ່າຍຂາຍໄລ່ລຽງຈຳນວນຮຸ້ນ ແລະ ເງິນ ໃຫ້ກັບຜູ້ລົງທຶນຝ່າຍຊື້ ແລະ ຝ່າຍຂາຍ.

## (4) ມື້ທີ 2 ຫຼັງມື້ທີ່ມີການຊື້-ຂາຍ (T+2) - ມື້ຊຳລະເງິນ ແລະ ສິ່ງມອບຮຸ້ນ




- ຜູ້ລົງທຶນຝ່າຍຊື້ຈະໄດ້ຮັບຮຸ້ນເຂົ້າບັນຊີຫຼັກຊັບໃນເວລາ 10:00 ໂມງ ເປັນຕົ້ນໄປ;
- ຜູ້ລົງທຶນຝ່າຍຂາຍຈະໄດ້ຮັບເງິນເຂົ້າບັນຊີເງິນສຳລັບຊື້-ຂາຍຮຸ້ນ ໃນເວລາ 10:00 ໂມງ ເປັນຕົ້ນໄປ;
- ຜູ້ລົງທຶນຝ່າຍຂາຍຕ້ອງແຈ້ງບໍລິສັດຫຼັກຊັບ ຫຼື ທະນາຄານຕົວແທນທີ່ກ່ຽວຂ້ອງເພື່ອໂອນເງິນເຂົ້າບັນຊີເງິນຝາກຂອງຕົນ ຫຼື ຜູ້ຂາຍສາມາດໂອນເງິນດ້ວຍຕົນເອງໄດ້ທາງອອນລາຍ ຈຶ່ງສາມາດນຳໃຊ້ເງິນໄດ້;
- ຕລຊລ ຊຳລະເງິນ ແລະ ຮຸ້ນໃຫ້ກັບສະມາຊິກຂອງຕົນ ໃນເວລາ 14:00 ໂມງ.

ການຊື້-ຂາຍ ພັນທະບັດລັດຖະບານ ແລະ ຮຸ້ນກູ້ ໃນ ຕລຊລ ແມ່ນຄ້າຍຄືກັນກັບ ການຊື້-ຂາຍຮຸ້ນ, ຜູ້ລົງທຶນສາມາດພົວພັນນຳບໍລິສັດຫຼັກຊັບເພື່ອສຶກສາຂໍ້ມູນ ຫຼື ລາຍລະອຽດເພີ່ມຕື່ມ.

## 12. ການປັນຜົນ (Dividend Payment)

⇨ ການປັນຜົນແມ່ນຂຶ້ນກັບນະໂຍບາຍຂອງບໍລິສັດ ບົນພື້ນຖານກົດໝາຍກຳນົດ. ບໍລິສັດສາມາດກຳນົດຈຳນວນຄັ້ງຂອງການປັນຜົນໃນປີ ແລະ ຮູບແບບການປັນຜົນ.

**ຮູບແບບການປັນຜົນ:**
- ການປັນຜົນເປັນເງິນ
- ການປັນຜົນເປັນຮຸ້ນ

⇨ ບໍລິສັດຈ່າຍເງິນປັນຜົນ ໃນກໍລະນີທີ່ມີກຳໄລ ແລະ ເປັນກຳໄລສຸດທິພາຍຫຼັງຫັກລາຍຈ່າຍຕ່າງໆ, ອາກອນ ແລະ ຫັກເຂົ້າຄັງຕ່າງໆຕາມລະບຽບການ ໂດຍຜ່ານການຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ.

# 13. ການຄຸ້ມຄອງ ວຽກງານຫຼັກຊັບ[3]




[3] *ວຽກງານຫຼັກຊັບ: ການອອກຈຳໜ່າຍຮຸ້ນ, ຮຸ້ນກູ້ ແລະ ການເຄື່ອນໄຫວຂອງພາກສ່ວນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ຄຄຊ.*

# ຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ)

ເປັນອົງການຈັດຕັ້ງສູງສຸດຂອງອົງການຄຸ້ມຄອງວຽກງານຫຼັກຊັບ ມີພາລະບົດບາດເປັນຜູ້ຄຸ້ມຄອງວຽກງານ ຫຼັກຊັບຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ, ຄຄຊ ມີໂຄງປະກອບຄື:

- ທ່ານຮອງນາຍົກລັດມົນຕີ ເປັນປະທານ;

- ທ່ານຜູ້ວ່າການ ທຫລ ເປັນຮອງປະທານຜູ້ທີ 1 ທັງເປັນຜູ້ປະຈຳການ; ແລະ
- ທ່ານຮອງລັດຖະມົນຕີກະຊວງການເງິນເປັນຮອງປະທານຜູ້ທີ 2;

- ທ່ານຮອງລັດຖະມົນຕີ ແລະ ທຽບເທົ່າ ຈາກຂະແໜງການເສດຖະກິດ, ຍຸຕິທຳ ແລະ ຂະແໜງການ ອື່ນທີ່ກ່ຽວຂ້ອງເປັນກຳມະການ, ທ່ານຫົວໜ້າ ສຄຄຊ ເປັນເລຂາ

# ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ)

ເປັນເສນາທິການ ແລະ ເປັນກົງຈັກຊ່ວຍວຽກໃຫ້ກັບ ຄຄຊ ໃນການຄຸ້ມຄອງ ຕິດຕາມ ກວດກາວຽກງານ ຫຼັກຊັບ ແລະ ມີຖານະທຽບເທົ່າກົມ ໂດຍມີທະນາຄານແຫ່ງ ສປປ ລາວ ເປັນຜູ້ຄຸ້ມຄອງທາງດ້ານ ການຈັດຕັ້ງ-ພະນັກງານ.





ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ບ້ານໂພນສະອາດ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ.
ໂທ: 021 2177770 ແຟກ: 021 217806

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ LSCO (ສຳນັກງານ ຄຄຊ) WWW.lsc.gov.la